**40. ຖ້າບໍລິສັດຈົດທະບຽນລົ້ມລະລາຍ ຜູ້ຖືຮຸ້ນຈະໄດ້ທຶນຄືນ ຫຼື ຕ້ອງໄດ້ໃຊ້ໜີ້ນຳຫຼືບໍ່ໃນເມື່ອບໍລິສັດມີໜີ້?**

ອີງຕາມ "ກົດໝາຍວ່າດ້ວຍວິສາຫະກິດ" (ສະບັບປັບປຸງ), ມາດຕາ 104 ຂໍ້ 7 ແລະ ຂໍ້ 10. ໃນກໍລະນີ ບໍລິສັດຈົດທະບຽນຫາກລົ້ມລະລາຍ ຜູ້ຖືຮຸ້ນຂອງບໍລິສັດຈົດທະບຽນດັ່ງກ່າວຈະສາມາດໄດ້ຮັບເງິນຄືນຕາມອັດຕາສ່ວນຮຸ້ນທີ່ຕົນເອງຖືຄອງຢູ່, ແຕ່ຕ້ອງແມ່ນໄດ້ຮັບພາຍຫຼັງທີ່ບໍລິສັດໄດ້ຊໍາລະໜີ້ສິນທຸກຢ່າງຄົບຖ້ວນໝົດແລ້ວ ແລະ ໃນກໍລະນີບໍລິສັດຫາກມີໜີ້ ຜູ້ຖືຮຸ້ນຈະບໍ່ໄດ້ໃຊ້ໜີ້ນໍາບໍລິສັດ ເນື່ອງຈາກຜູ້ຖືຮຸ້ນໄດ້ຖອກເງິນຕາມອັດຕາສ່ວນຮຸ້ນທີ່ຕົນຖືຄອງໝົດແລ້ວໃນເບື້ອງຕົ້ນ.